The Lao Rugby Federation
Ban Thong Kang, Sisattanak District,
Vientiane Capital, Lao PDR
+856 21 315 795 info@laorugby.com

ລາວຣັກບີ້
LAO RUGBY

# ສະຫຼູບການເຄື່ອນໄຫວປີ 2014

ບົດສະຫຼູບການເຄື່ອນໄຫວຂອງ ສະຫະພັນກິລາຣັກບີ້ ປະຈຳປີ 2014 ໄດ້ມີການຈັດກິດຈະກຳ ແລະ ການເຄື່ອນໄຫວແຂ່ງຂັນພາຍໃນ ແລະ ຕ່າງປະເທດດັ່ງນີ້:

- ໃນເດືອນມັງກອນ ຈັດກິດຈະກຳຈຳປາບານ, ເຂົ້າຮ່ວມການຝຶກສອນຣັກບີ້ໃຫ້ນັກກິລາຢູ່ສົມສະຫງ່າ, ຈັດແບ່ງຄູຝຶກລົງເຮັດກິດຈະກຳຝຶກສອນຣັກບີ້ໃນໂຮງຮຽນຕ່າງໆມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ.

- ໃນເດືອນກຸມພາ ຈັດກິດຈະກຳຈຳປາບານ, ເຂົ້າຮ່ວມການຝຶກສອນຣັກບີ້ໃຫ້ນັກກິລາຢູ່ສົມສະຫງ່າ, ຈັດແບ່ງຄູຝຶກລົງເຮັດກິດຈະກຳຝຶກສອນຣັກບີ້ໃນໂຮງຮຽນຕ່າງໆ, ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ຈັດການແຂ່ງຂັນຣັກບີ້ນານາຊາດໃນລາຍການ VIRC2014 ປະເພດສະໂມສອນໂດຍມີສະໂມສອນຈາກຫຼາຍປະເທດເຂົ້າຮ່ວມ.

- ໃນເດືອນມີນາ ຈັດກິດຈະກຳຈຳປາບານ, ເຂົ້າຮ່ວມການຝຶກສອນຣັກບີ້ໃຫ້ນັກກິລາຢູ່ສົມສະຫງ່າ, ຈັດແບ່ງຄູຝຶກລົງເຮັດກິດຈະກຳຝຶກສອນຣັກບີ້ໃນໂຮງຮຽນຕ່າງໆ, ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ສົ່ງທີມເຂົ້າຮ່ວມການແຂ່ງຂັນ ຣັກບີ້ ໃນລາຍການ Kowloon 10's ທີ່ ຮ່ອງກົງ ເປັນການລວມນັກກິລາຈາກທຸກສະໂມສອນໃນລາວໂດຍໃສ່ຊື່ວ່າ ທີມພະຍານາກລາວ(ຊາຍ) ທີມໄລຣເກີ(ຍິງ).

- ໃນເດືອນເມສາຈັດກິດຈະກຳຈຳປາບານ, ເຂົ້າຮ່ວມການຝຶກສອນຣັກບີ້ໃຫ້ນັກກິລາຢູ່ສົມສະຫງ່າ, ຈັດແບ່ງຄູຝຶກລົງເຮັດກິດຈະກຳຝຶກສອນຣັກບີ້ໃນໂຮງຮຽນຕ່າງໆ, ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ພະຍາຍາມຕິດຕໍ່ກັບອົງການຊ່ວຍເຫຼືອເດັກນ້ອຍເຊັ່ນ ປາແດກ ເພື່ອທີ່ເຮົາຈະສາມາດເຄື່ອນໄຫວກິດຈະກຳຂອງເຮົາໃນຊ່ວງໄລຍະພັກແລ້ງ, ກະກຽມທີມຊາດລາວເພື່ອເປັນເຈົ້າພາບຈັດການແຂ່ງຂັນ A5N ເຊິ່ງປະກອບມີ4 ປະເທດເຂົ້າຮ່ວມຄື : Guam , Indonesia , China and Laos.

- ໃນເດືອນພຶດສະພາ ຈັດກິດຈະກຳຈຳປາບານ, ເຂົ້າຮ່ວມການຝຶກສອນຣັກບີ້ໃຫ້ນັກກິລາຢູ່ສົມສະຫງ່າ, ລົງສອນໃຫ້ມູນລະນິທິຕ່າງໆເຊັ່ນ ປາແດກ, ເພື່ອນມິດ ແລະ ອື່ນໆ, ກຽມທີມເພື່ອໄປແຂ່ງຂັນຢູ່ເມືອງໜອງແຮດ, ແຂວງຊຽງຂວາງ ທີມຍິງ 1 ທີມ ແລະ ຊາຍ 1ທີມ ວັນທີ 20-23/6/2014, ວາງແຜນຈັດການແຂ່ງຂັນ touch rugbyເພື່ອໃຫ້ນັກກິລາຣຸ່ນເກົ່າ ແລະ ໃໝ່ ມີຄວາມມ່ວນຊື່ນ ,ຄວາມສາມັກຄີ ແລະ ນັກຣັກບີ້ທຸກຄົນຈະໄດ້ຮູ້ຈັກກັນຫຼາຍຂຶ້ນ, ຈັດການແຂ່ງຂັນຣັກບີ້ A5N ໂດຍມີປະເທດເຂົ້າຮ່ວມຄື : Guam ,

Indonesia , China and Laos. ນອກຈາກນັ້ນທາງສະຫະພັນລາວລັກບີ້ຍັງໄດ້ເປັນເຈົ້າ ພາບຈັດກອງປະຊຸມ Asian Rugby Meeting ໂດຍເຂົ້າຮ່ວມຂອງປະທານ ນັກກິລາລັກບີ້ 29 ປະເທດ.

- ໃນເດືອນມິຖຸນາ ເຂົ້າຮ່ວມການຝຶກສອນຣັກບີ້ໃຫ້ນັກກິລາຢູ່ສົມສະຫງ່າ, ລົງສອນໃຫ້ມູນລະນິທິຕ່າງໆ, ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ເຂົ້າຮ່ວມການແຂ່ງຂັນຣັກບີ້ຢູ່ທີ່ຂອນແກ່ນປະເທດໄທໃນປະເພດ 7 ຄົນ, ກະກຽມທີມຍິງ ແລະ ຊາຍໄດ້ມີການຝຶກຊ້ອມກຽມໄປເອຊຽນເກມ, ໄດ້ມີຄູຝຶກສອງຄົນຈາກສະຫະພັນກິລາຣັກບີ້ຜ່ານການຝຶກອົບຮົມ Coaching course level 2.

- ໃນເດືອນກໍລະກົດ ເຂົ້າຮ່ວມການຝຶກສອນຣັກບີ້ໃຫ້ນັກກິລາຢູ່ສົມສະຫງ່າ, ລົງສອນໃຫ້ມູນລະນິທິຕ່າງໆ ເຊັ່ນ ປາແດກ, ເພື່ອນມິດ ແລະ ອື່ນໆ, ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ຝຶກຊ້ອມກະກຽມທີມຊາດຜູ້ຍິງໄປເອຊຽນເກມ "ທີມຊາຍໄດ້ມີການຖອນທີມເນື່ອງຈາກນັກກິລາບໍ່ພ້ອມ", ຈັດການແຂ່ງຂັນຣັກບີ້ປະເພດ7ຄົນ ຄັ້ງແຮກຂອງລາວທີ່ມີທີມຈາກຕ່າງປະເທດເຂົ້າຮ່ວມເປັນຕົ້ນແມ່ນປະເທດໄທ.

- ໃນເດືອນສິງຫາ ເຂົ້າຮ່ວມການຝຶກສອນຣັກບີ້ໃຫ້ນັກກິລາຢູ່ສົມສະຫງ່າ, ລົງສອນໃຫ້ມູນລະນິທິຕ່າງໆເຊັ່ນ ປາແດກ, ເພື່ອນມິດ ແລະ ອື່ນໆ, ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ມີການຝຶກຊ້ອມຊອກຫາຄູຝຶກໃໝ່ໆຂື້ນເພື່ອຈະຮັບເອົາມາເປັນຄູຝຶກປະຈໍາໂຮງຮຽງ, ແລະ ຝຶກຊ້ອມກະກຽມທີມຊາດຜູ້ຍິງໄປເອຊຽນເກມ.

- ໃນເດືອນກັນຍາ ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ມີການຝຶກຊ້ອມຊອກຫາຄູຝຶກໃໝ່ໆຂື້ນເພື່ອຈະຮັບເອົາມາເປັນຄູຝຶກປະຈໍາໂຮງຮຽນ, ທີມຊາດຜູ້ຍິງເຂົ້າຮ່ວມການແຂ່ງຂັນເອຊຽນເກມທີ່ປະເທດເກົາຫຼີ.

- ໃນເດືອນຕຸລາ ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ມີການຝຶກຊ້ອມຊອກຫາຄູຝຶກໃໝ່ໆຂື້ນເພື່ອຈະຮັບເອົາມາເປັນຄູຝຶກປະຈໍາໂຮງຮຽນ, ໄດ້ມີການຝຶກອົບຮົມໃຫ້ຊາວໜຸ່ມຢູ່ໜອງແຮດເພື່ອເຜີຍແຜ່ກິດຈະກໍາທີ່ຈະເກີດຂື້ນໃນປີໜ້າ, ທາງສະຫະພັນຍັງໄດ້ສົ່ງພະນັກງານ ແລະ ນັກກິລາທີມຊາດຈໍານວນໜຶ່ງລົງໄປເມືອງບາຈຽງແຂວງຈໍາປາສັກ ເພື່ອເຜີຍແຜ່ກິລາຣັກບີ້ອີກດ້ວຍ.

- ໃນເດືອນພະຈິກ ມີການຝຶກຊ້ອມຂອງທຸກສະໂມສອນໃນປະເທດ, ມີການຝຶກຊ້ອມຊອກຫາຄູຝຶກໃໝ່ໆຂື້ນເພື່ອຈະຮັບເອົາມາເປັນຄູຝຶກປະຈໍາໂຮງຮຽນ, ຈັດຝຶກຊ້ອມເລີກນັກກິລາໄປແຂ່ງຂັນ ຣັກບີ້ bangkok7's ທີ່ປະເທດໄທ ໂດຍໃຊ່ຊື່ທີມວ່າພະຍາຍາກລາວ(ຊາຍ) ທີມສິງ(ຍິງ), ແລະ ຍັງໄດ້ເຂົ້າຮ່ວມແຂ່ງຂັນງານ RSBC 7's ທີ່ປະເທດໄທເຊັ່ນດຽວກັນຄັ້ງນີ້ທາງສະຫະພັນເຮົາໄດ້ສົ່ງທີມເປັນຕົວແທນໄປໄດ້ແກ່ທີມພະຍານາກລາວ(ຊາຍ)ແລະທີມຊາຍອາຍຸບໍ່ເກີນ 20 ປີ ເຂົ້າຮ່ວມການແຂ່ງຂັນ, ໃນງານບຸນພະທາດຫລວງວຽງຈັນເຮົາໄດ້ຈັດກິດຈະກໍາຮ່ວມກັບອົງການຊ່ວຍເຫຼືອລ້າເຊັ່ນ Save the children, Childfund ແລະ

ຍັງມີການແຂ່ງຂັນວອມອັບກ່ອນລະດູການເປີດຢູ່ໜອງແຮດແຂວງຊຽງຂວາງ, ຈາກນີ້ຍັງມີພະນັກງານຍິງ2 ຄົນເປັນຕ່າງໜ້າໃຫ້ແກ່ສະຫະພັນໄປຝຶກອົບຮົມອາຈານສອນຄູຝຶກທີ່ປະເທດຟີລິບປິ້ນ.

- ໃນເດືອນທັນວາ ທາງສະຫະພັນເຮົາໄດ້ຈັດການແຂ່ງຂັນເພື່ອສະເຫຼີມສະຫຼອງວັນ

ຊາດທີ2ທັນວາ ໂດຍໄດ້ເຊີນນັກກີລາຮຸ່ນເກົ່າ ແລະ ນັກກີລາປະຈຸບັນເຂົ້າຮ່ວມ ການແຂ່ງຂັນ, ສະຫະພັນຍັງໄດ້ຂຶ້ນໄປເມືອງໜອງແຮດແຂວງຊຽງຂວາງເພື່ອຝຶກອົບຮົມກ່ຽວກັບຜູ້ຈັດການທີມ ກຳມະການ ຄູຝຶກໃຫ້ແກ່ຊາວໜຸ່ມທີ່ມີຄວາມສົນໃຈ, ຈາກນັ້ນຍັງໄດ້ຈັດການແຂ່ງຂັນໜອງແຮດລີກຂື້ນທີ່ແຂວງຊຽງຂວາງ, ໃນຊ່ວງເວລາດຽວກັນທາງສະຫະພັນຍັງໄດ້ສົ່ງພະນັກງານ ແລະ ນັກກີລາທີມຊາດຈຳນວນໜຶ່ງລົງໄປເມືອງບາຈຽງແຂວງຈຳປາສັກ ເພື່ອເຜີຍແຜ່ກີລາຣັກບີ້ອີກດ້ວຍ.